ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 026 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 17 JAN 2023

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

: ທ່ານ ຜູ້ອຳນວຍການໃຫ່ຍຕະຫລາດຫຼັກຊັບລາວ

: ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ສົກປີ 2022 ຄັ້ງວັນທີ 16/1/2023.

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດວ້ຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບໍລິສັດ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມ ວິສາມັນຜູ້ຖືຮຸ້ນ ສົກປີ 2022 (ຕໍ່ໄປນີ້ຮຽກວ່າ : ກອງປະຊຸມ) ໄດ້ໄຂຂຶ້ນໃນເວລາ 14:00 ຫາ 16:00 ໂມງ ຂອງວັນທີ 16/01/2022 ທີ່ຫ້ອງປະຊຸມຊັ້ນ 8 ອາຄານຕະຫຼາດຫຼັກຊັບລາວ ນະຄອນຫຼວງວຽງຈັນ ໂດຍການ ເປັນປະທານຂອງ ທ່ານ ວັນທອງ ສິດທິກຸມ ຮອງປະທານສະພາບໍລິຫານ ບຊລ, ພ້ອມດ້ວຍສະມາຊິກສະພາ ບໍລິຫານ ບຊລ, ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 21 ທ່ານ ໃນນີ້ ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງ ຈຳນວນທັງໝົດ 9 ທ່ານ, ຜູ້ມອບສິດຈຳນວນ 10 ທ່ານ, ຊຶ່ງກວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມ ເທົ່າກັບ 35,591,200 ຮຸ້ນ, ນັບທັງຮຸ້ນທີ່ຖືກມອບສິດ, ບັນລຸອັດຕາສ່ວນ 89% ຂອງຈຳນວນຮຸ້ນ ບຊລ ທັງໝົດ ແລະຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມລະບຽບການຂອງ ບຊລ ແລະ ກົດໝາຍທີ່ກ່ຽວຂ້ອງ, ສຳລັບຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມມີຈຳນວນ 4,412,800 ຮຸ້ນເທົ່າກັບ 11% ຂອງຈຳນວນຮຸ້ນ ບຊລ.

<u>ກອງປະຊຸມໄດ້ພິຈາລະນາ ແລະມີມະຕິດັ່ງນີ້</u> :

- **ວາລະທີ 1**: ພິຈາລະນາ ແລະຮັບຮອງການປ່ຽນແປງຂາຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມ ກອງປະຊຸມຄື :

- ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 2**: ພິຈາລະນາ ແລະ ຮັບຮອງການປ່ຽນແປງຜູ້ຕາງໜ້າທີ່ຖືກກົດໝາຍ (ຜູ້ອຳນວຍການໃຫ່ຍ) ຂອງບໍລິສັດ ຊີມັງລາວ ມະຫາຊົນ.

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 3**: ພິຈາລະນາແລະຮັບຮອງສືບຕໍ່ຈັດຕັ້ງປະຕິບັດຕາມແຜນປັບປຸງ ແລະຟື້ນຟູທຸລະກິດ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ.

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 4** : ພິຈາລະນາ ແລະ ຮັບຮອງການສະສາງຊັບສິນຂອງບໍລິສັດຊີມັງລາວມະຫາຊົນທີ່ບໍ່ກ່ຽວຂ້ອງກັບຂະແໜງການທ່ອງທ່ຽວ ແລະ ວັດທະນະທຳ

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 5** : ພິຈາລະນາ ແລະ ຮັບຮອງ ການໂອນຊື່ເຈົ້າຂອງທີ່ດິນສຳນັກງານຢູ່ບ້ານໂພນພະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ຈາກຊື່ບຸກຄົນມາອອກຊື່ບໍລິສັດຊີມັງລາວມະຫາຊົນ ຫຼື ຊື່ບໍລິສັດທີ່ຈະປ່ຽນຊື່ໃໝ່ຕາມ ການເຕົາລົງຂອງສະພາບໍລິຫານ.

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 6 :** ພິຈາລະນາ ແລະ ຮັບຮອງການຮື້ຖອນ ແລະ ປຸກສ້າງສຳນັກງານຂອງບໍລິສັດຊີມັງລາ ມະຫາຊົນຄືນໃໝ່ກ່ອນເດືອນ ພຶດສະພາ 2023

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

- ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
- ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 7 :** ພິຈາລະນາ ແລະ ຮັບຮອງການປ່ຽນແປງຂະແໜງທຸລະກິດ ແລະປ່ຽນຊື່ບໍລິສັດ

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 8 :** ພິຈາລະນາ ແລະ ຮັບຮອງສະເໜີຕໍ່ຂັ້ນເທິງ ເພື່ອເລືອກເອົາສະຖານທີ່ ແລະອາຄານໂຮງງານ ຊີມັ້ງວັ້ງວຽງ ຫຼັງ 1 ເຂົ້າຮ່ວມກັບໂຄງການທ່ອງທ່ຽວ ແລະວັດທະນະທຳຂອງບໍລິສັດ ຊີມັ້ງລາວ ມະຫາຊົນ.

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

- **ວາລະທີ 9 :** ພິຈາລະນາ ແລະ ຮັບຮອງ ການສ້າງຂໍ້ກຳນົດ-ກົດລະບຽບ ແລະໂຄງຮ່າງການຈັດຕັ້ງຂອງ ບໍລິສັດ ຊີມັ້ງລາວ ມະຫາຊົນ ຄືນໃໝ່.

  ມະຕິ : ກອງປະຊຸມໄດ້ພິຈາລະນາ ແລະເຫັນດີດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມຄື :

  - ເຫັນດີຈຳນວນ 35,591,200 ສຽງ ເທົ່າກັບ 100 %
  - ບໍ່ເຫັນດີຈຳນວນ 0 ສຽງ ເທົ່າກັບ 0 %

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານ ເພື່ອຊາບ ໃຊ້ຕາງລາຍງານ
ດ້ວຍຄວາມເຄົາລົບ ແລະນັບຖືເປັນຢ່າງສູງ,

ປະທານກອງປະຊຸມ

ວັນທອງ ສິດທິກຸນ